ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 299 /ລບ

ນະຄອນຫຼວງວຽງຈັນ, ວັນທີ 04/09/2019.

# ດຳລັດ
# ວ່າດ້ວຍ ກອງທຶນສົ່ງເສີມ
# ວິສາຫະກິດຂະໜາດນ້ອຍ ແລະ ກາງ

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມໜັງສືສະເໜີຂອງ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1138/ອຄ.ກສວ, ລົງວັນທີ 03 ກັນຍາ 2019.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບ ການຈັດຕັ້ງ, ການຄຸ້ມຄອງ, ການນຳໃຊ້ ແລະ ການກວດກາ ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອສະໜອງທຶນໃຫ້ກິດຈະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຂັ້ມແຂງ ແລະ ເຕີບໃຫຍ່ຂະຫຍາຍຕົວ ແນໃສ່ເພີ່ມທະວີການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ, ການຂະຫຍາຍຖານລາຍຮັບ, ສ້າງປະຖົມປັດໃຈໃຫ້ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເທື່ອລະກ້າວ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດແຫ່ງຊາດ ແລະ ການລຶບລ້າງຄວາມທຸກຍາກ.

### ມາດຕາ 2 ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ

ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຂຽນຫຍໍ້ວ່າ "ທສວ" ເປັນພາສາອັງກິດວ່າ Small and Medium Enterprise Promotion Fund, ຂຽນຫຍໍ້ວ່າ "SME Fund" ແມ່ນການຈັດຕັ້ງການເງິນໜຶ່ງຂອງລັດ ທີ່ຂຶ້ນກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ມີພາລະບົດບາດໃນການລະດົມທຶນຈາກ

ແຫຼ່ງຕ່າງໆ ຢ່າງລວມສູນ ແນໃສ່ຮັບປະກັນໃຫ້ມີທຶນຮອນທີ່ໝັ້ນຄົງ ແລະ ຕໍ່ເນື່ອງ ເຂົ້າໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ເຕີບໃຫຍ່, ເຂັ້ມແຂງ ແລະ ຍືນຍົງ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບຕ່າງໆທີ່ນຳໃຊ້ຢູ່ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

1. ວິສາຫະກິດຂະໜາດນ້ອຍ ແລະ ກາງ ໝາຍເຖິງ ຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນ ແລະ ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ໂດຍຖືເອົາຈຳນວນແຮງງານ ສະເລ່ຍໃນປີ, ມູນຄ່າຊັບສິນທັງໝົດ ຫຼື ລວມຍອດລາຍຮັບທຸລະກິດປະຈຳປີ ແລະ ແຍກຕາມແຕ່ລະຂະແໜງວິສາຫະກິດ ເປັນພື້ນຖານບ່ອນອີງໃນການກຳນົດ ແລະ ໄດ້ແຍກເປັນ 3 ຂະໜາດ ຄື: ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ວິສາຫະກິດຂະໜາດກາງ ຕາມການກຳນົດຂອງລັດຖະບານໃນແຕ່ລະໄລຍະ;

2. ວິສາຫະກິດກວດສອບ ໝາຍເຖິງ ການຈັດຕັ້ງວິຊາຊີບກວດສອບ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບອະນຸຍາດຈາກ ກະຊວງການເງິນ ແລະ ໄດ້ຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍ.

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບ ທສວ

ລັດ ປະກອບທຶນເບື້ອງຕົ້ນ ໃນການສ້າງຕັ້ງ ທສວ ແລະ ສະໜອງທຶນຕາມຄວາມສາມາດ ຕົວຈິງໃນແຕ່ລະໄລຍະ ເພື່ອຮັບປະກັນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງລັດຖະບານ ໃຫ້ປະກົດຜົນເປັນຈິງ.

ລັດ ນຳໃຊ້ ທສວ ເປັນເຄື່ອງມືໃນການດັດສົມການສະໜອງສິນເຊື່ອໃຫ້ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມນະໂຍບາຍຂອງ ລັດຖະບານ ໃນແຕ່ລະໄລຍະ ແຕ່ບໍ່ແມ່ນປ່ຽນແທນການສະໜອງສິນເຊື່ອ ທີ່ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ດຳເນີນຢູ່.

ລັດ ສ້າງເງື່ອນໄຂໃຫ້ ທສວ ເຄື່ອນໄຫວວຽກງານຢ່າງເປັນເຈົ້າຕົນເອງ, ມີປະສິດທິພາບ ແລະ ປະສິດທິຜົນ ໂດຍໃຫ້ບັນດາຂະແໜງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືກັບການເຄື່ອນໄຫວຂອງ ທສວ ພ້ອມທັງ ຄົ້ນຄວ້າ, ພິຈາລະນາ ປັບປຸງ ການຈັດຕັ້ງປະຕິບັດ ບາງມາດຕາຂອງກົດໝາຍ ທີ່ເປັນອຸປະສັກຕໍ່ການເຄື່ອນໄຫວວຽກງານ ທສວ.

ລັດ ອຳນວຍຄວາມສະດວກໃຫ້ ທສວ ເພື່ອລະດົມທຶນຈາກແຫຼ່ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

### ມາດຕາ 5 ຫຼັກການການເຄື່ອນໄຫວຂອງ ທສວ

ທສວ ເຄື່ອນໄຫວວຽກງານຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ;
2. ມີຄວາມເປັນເຈົ້າຕົນເອງ ທາງດ້ານການເງິນ ແລະ ການເຄື່ອນໄຫວວຽກງານ;
3. ຮັບປະກັນ ການເຄື່ອນໄຫວຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ;
4. ຮັບປະກັນຄວາມໂປ່ງໃສ ແລະ ຄວາມຍຸຕິທຳ ໃນການນຳໃຊ້ທຶນຂອງ ທສວ;
5. ຮັບປະກັນໃຫ້ມີການນຳພາ-ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນຢ່າງເປັນປົກກະຕິ.

## ໝວດທີ 2
## ຈຸດປະສົງ ຂອງການສ້າງຕັ້ງ ແລະ ການນຳໃຊ້ທຶນ ຂອງ ທສວ

### ມາດຕາ 6 ຈຸດປະສົງ ຂອງການສ້າງຕັ້ງ ທສວ

ການສ້າງຕັ້ງ ທສວ ມີຈຸດປະສົງ ດັ່ງນີ້:

1. ເປັນບ່ອນລະດົມທຶນຈາກແຫຼ່ງຕ່າງໆຢ່າງລວມສູນ ແນໃສ່ຮັບປະກັນໃຫ້ມີທຶນທີ່ໝັ້ນຄົງ ແລະ ຕໍ່ເນື່ອງເຂົ້າໃນວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີປະສິດທິຜົນ;

2. ຄຸ້ມຄອງບໍລິຫານທຶນ ທີ່ນຳໃຊ້ເຂົ້າໃນການສະໜອງສິນເຊື່ອ ແລະ ການຈັດຕັ້ງປະຕິບັດບັນດາໂຄງການວິຊາການ ເພື່ອສ້າງຄວາມເຂັ້ມແຂງ ແລະ ຄວາມສາມາດໃນການແຂ່ງຂັນ ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ;

3. ເປັນເຄື່ອງມືດັດສົມການສະໜອງສິນເຊື່ອ ເພື່ອສ້າງເງື່ອນໄຂໃຫ້ ວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດເຂົ້າເຖິງແຫຼ່ງທຶນໄດ້ຫຼາຍຂຶ້ນ ທັງມີດອກເບ້ຍ ແລະ ໄລຍະການກູ້ຢືມທີ່ເໝາະສົມ ຕາມນະໂຍບາຍ ຂອງ ລັດຖະບານ ໃນແຕ່ລະໄລຍະ.

### ມາດຕາ 7 ແຫຼ່ງທຶນ ຂອງ ທສວ

ທສວ ໄດ້ທຶນມາຈາກແຫຼ່ງຕ່າງໆ ດັ່ງນີ້:

1. ການປະກອບທຶນ ຂອງ ລັດຖະບານ ໃນແຕ່ລະໄລຍະ;
2. ການຊ່ວຍເຫຼືອລ້າ;
3. ການກູ້ຢືມຈາກ ພາຍໃນ ຫຼື ຕ່າງປະເທດ;
4. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດ້ວຍຄວາມສະໝັກໃຈ;
5. ລາຍຮັບຈາກການບໍລິຫານ ທສວ;
6. ແຫຼ່ງອື່ນທີ່ບໍ່ຂັດກັບກົດໝາຍ.

### ມາດຕາ 8 ເປົ້າໝາຍການນຳໃຊ້ທຶນຂອງ ທສວ

ທຶນຂອງ ທສວ ຈະນຳໃຊ້ໃນ ສອງ ເປົ້າໝາຍ ດັ່ງນີ້:

1. ສະໜອງສິນເຊື່ອໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນບັນດາຂະແໜງການ ຫຼື ຂົງເຂດບູລິມະສິດຕາມນະໂຍບາຍ ຂອງ ລັດຖະບານ ໃນແຕ່ລະໄລຍະ;

2. ສະໜອງທຶນໃຫ້ບັນດາໂຄງການວິຊາການ ຕາມກິດຈະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ.

ທຶນທີ່ໄດ້ຮັບຈາກການປະກອບທຶນຂອງລັດຖະບານ ຕາມທີ່ກຳນົດໃນ ຂໍ້ 1 ມາດຕາ 7 ຂອງດຳລັດສະບັບນີ້ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ທີ່ກຳນົດໃນຂໍ້ທີ 1 ຂອງມາດຕານີ້ ຈຳນວນ 91 ສ່ວນຮ້ອຍ ຂຶ້ນໄປ, ນຳໃຊ້ສຳລັບໂຄງການວິຊາການ ບໍ່ເກີນ 8 ສ່ວນຮ້ອຍ ແລະ ນຳໃຊ້ສຳລັບການບໍລິຫານກອງທຶນ ບໍ່ເກີນ 1 ສ່ວນຮ້ອຍ. ໃນກໍລະນີ ລັດຖະບານ ບໍ່ປະກອບທຶນໃຫ້ ທສວ ຢ່າງຕໍ່ເນື່ອງໃນແຕ່ລະປີ ລັດຖະບານ ຈະພິຈາລະນາສະໜອງທຶນສຳລັບໂຄງການວິຊາການ ແລະ ການບໍລິຫານ ທສວ ຕາມຄວາມເໝາະສົມ.

ທຶນທີ່ໄດ້ຮັບຈາກແຫຼ່ງອື່ນ ທີ່ບໍ່ແມ່ນ ການປະກອບທຶນຂອງລັດຖະບານ ໃຫ້ປະຕິບັດຕາມເງື່ອນໄຂ ຂອງ ຜູ້ໃຫ້ທຶນ ແລະ/ຫຼື ຕາມການພິຈາລະນາຂອງສະພາບໍລິຫານ ທສວ.

ມາດຕາ 9 ຂະແໜງການ ແລະ ຂົງເຂດບຸລິມະສິດທີ່ໄດ້ຮັບການສົ່ງເສີມ

ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ຈະໄດ້ຮັບບຸລິມະສິດ ໃນການສະໜອງສິນເຊື່ອ ຕາມເປົ້າໝາຍການນຳໃຊ້ທຶນ ຂອງ ທລວ ທີ່ກຳນົດໃນ ມາດຕາ 8 ຂອງດຳລັດສະບັບນີ້ ປະກອບມີຂະແໜງການດັ່ງນີ້:

1. ຂະແໜງອຸດສາຫະກຳ ປຸງແຕ່ງຜະລິດຕະພັນກະສິກຳ;
2. ຂະແໜງຫັດຖະກຳ;
3. ຂະແໜງກະສິກຳ ປູກຝັງ ແລະ ລ້ຽງສັດ;
4. ຂະແໜງທ່ອງທ່ຽວ.

ລັດຖະບານ ສາມາດປັບປຸງ ຫຼື ກຳນົດເພີ່ມເຕີມ ຂະແໜງການບຸລິມະສິດ ໃນແຕ່ລະໄລຍະ ຕາມການສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ຂົງເຂດບຸລິມະສິດ ຂອງລັດຖະບານ ປະກອບມີ ເຂດຫ່າງໄກສອກຫຼີກ ແລະ ເຂດທຸກຍາກ ຕາມການກຳນົດ ຂອງ ລັດຖະບານ ໃນແຕ່ລະໄລຍະ.

## ໝວດທີ 3
## ການສະໜອງສິນເຊື່ອ

ມາດຕາ 10 ການສະໜອງສິນເຊື່ອ

ທລວ ສາມາດສະໜອງສິນເຊື່ອໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຮູບແບບຕ່າງໆ ດັ່ງນີ້:

1. ສະໜອງສິນເຊື່ອ ຜ່ານທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ເພື່ອເປັນທຶນໃນການເຄື່ອນໄຫວທຸລະກິດ ຂອງ ວິສາຫະກິດຂະໜາດນ້ອຍ ແລະ ກາງ;

2. ສະໜອງສິນເຊື່ອ ເພື່ອຊ່ວຍຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ມີບັນຫາດ້ານການເງິນ ແຕ່ມີຄວາມສາມາດໃນການຜະລິດ ແລະ ມີຕະຫຼາດຮອງຮັບທີ່ໝັ້ນຄົງ;

3. ສະໜອງສິນເຊື່ອ ໃນຮູບແບບການລົງທຶນຮ່ວມກັບວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ມີແຜນທຸລະກິດທີ່ດີ ແຕ່ບໍ່ສາມາດເຂົ້າເຖິງແຫຼ່ງທຶນໄດ້ ຍ້ອນຂາດຫຼັກຊັບຄ້ຳປະກັນ;

4. ສະໜອງສິນເຊື່ອ ໃນຮູບແບບການປະກອບທຶນໃຫ້ກອງທຶນອື່ນ ທີ່ມີເງື່ອນໄຂ ເພື່ອສະໜອງຕໍ່ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນຕົ້ນແມ່ນ ຜູ້ປະກອບກິດຈະການໃໝ່;

5. ສະໜອງສິນເຊື່ອ ໃນຮູບແບບອື່ນ ທີ່ເຫັນວ່າມີປະສິດທິຜົນ.

ສຳລັບທຶນທີ່ລັດຖະບານປະກອບໃຫ້ ຕາມທີ່ກຳນົດໃນຂໍ້ 1 ມາດຕາ 7 ຂອງດຳລັດສະບັບນີ້ ແມ່ນນຳໃຊ້ສະໜອງສິນເຊື່ອ ໃນຮູບແບບທີ 1 ເທົ່ານັ້ນ.

ສຳລັບທຶນທີ່ໄດ້ຮັບຈາກແຫຼ່ງທຶນອື່ນ ແມ່ນສາມາດນຳໃຊ້ສະໜອງສິນເຊື່ອໃນທຸກຮູບແບບ ໂດຍສອດຄ່ອງກັບເງື່ອນໄຂ ຂອງຜູ້ໃຫ້ທຶນ ແລະ ຕາມການຕົກລົງ ຂອງສະພາບໍລິຫານ ທລວ.

ການສະໜອງສິນເຊື່ອ ຕາມຮູບແບບທີ່ກຳນົດໃນຂໍ້ 2, 3, 4 ແລະ 5 ຂອງມາດຕານີ້ ແມ່ນ ມີລະບຽບການສະເພາະ.

ມາດຕາ 11 ການກຳນົດ ຈຳນວນເງິນກູ້ສູງສຸດ ແລະ ໄລຍະເວລາກູ້ຢືມ

ຈຳນວນເງິນກູ້ທີ່ສະໜອງໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ສູງສຸດບໍ່ເກີນ 70 ສ່ວນຮ້ອຍ ຂອງມູນຄ່າຊັບສິນທັງໝົດ ຂອງວິສາຫະກິດທີ່ກູ້ຢືມ, ໄລຍະເວລາກູ້ຢືມສູງສຸດບໍ່ເກີນ 10 ປີ ສຳລັບທຶນຄົງທີ່ ແລະ ບໍ່ເກີນ 5 ປີ ສຳລັບທຶນໝູນວຽນ.

ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ລົງທຶນຢູ່ໃນຂົງເຂດບຸລິມະສິດ ຂອງ ລັດຖະບານ ຈະໄດ້ຮັບການພິຈາລະນາ ຈຳນວນທຶນສູງສຸດ ເກີນ 70 ສ່ວນຮ້ອຍ ແຕ່ບໍ່ເກີນ 100 ສ່ວນຮ້ອຍ ຂອງມູນຄ່າຊັບສິນທັງໝົດ ຂອງວິສາຫະກິດທີ່ກູ້ຢືມ ໂດຍມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາຕົກລົງ ຕາມການສະເໜີ ຂອງສະພາບໍລິຫານ ທລສ.

**ມາດຕາ 12 ດອກເບ້ຍ ສຳລັບ ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ**

ດອກເບ້ຍ ສຳລັບ ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ແມ່ນ ດອກເບ້ຍ ທີ່ ທລສ ເກັບຈາກການສະໜອງທຶນໃຫ້ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ເພື່ອເປັນສິນເຊື່ອໃຫ້ວິສາຫະກິດ ຂະໜາດໜ້ອຍ ແລະ ກາງ.

ດອກເບ້ຍ ສຳລັບ ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ໃຫ້ປະຕິບັດ ດັ່ງນີ້:

1. ການສະໜອງສິນເຊື່ອ ທີ່ນຳໃຊ້ທຶນ ທີ່ໄດ້ຮັບຈາກການປະກອບທຶນຂອງລັດຖະບານ ຕາມທີ່ກຳນົດໃນ ຂໍ້ 1 ມາດຕາ 7 ຂອງດຳລັດ ສະບັບນີ້ ແມ່ນບໍ່ເກັບດອກເບ້ຍ;

2. ການສະໜອງສິນເຊື່ອ ທີ່ນຳໃຊ້ທຶນ ທີ່ໄດ້ຮັບຈາກແຫຼ່ງອື່ນ ທີ່ບໍ່ແມ່ນການປະກອບທຶນຂອງລັດຖະບານ ໃຫ້ປະຕິບັດຕາມເງື່ອນໄຂຂອງ ຜູ້ໃຫ້ທຶນ ຫຼື ຕາມການພິຈາລະນາຂອງສະພາບໍລິຫານ ທລສ ຕາມຄວາມເໝາະສົມ.

**ມາດຕາ 13 ດອກເບ້ຍ ສຳລັບ ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ດອກເບ້ຍ ສຳລັບ ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນດອກເບ້ຍ ທີ່ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ເກັບຈາກການສະໜອງສິນເຊື່ອໃຫ້ ວິສາຫະກິດຂະໜາດໜ້ອຍ ແລະ ກາງ.

ດອກເບ້ຍ ສຳລັບ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ປະຕິບັດ ດັ່ງນີ້:

1. ການສະໜອງສິນເຊື່ອ ທີ່ນຳໃຊ້ທຶນ ທີ່ໄດ້ຮັບຈາກການປະກອບທຶນ ຂອງ ລັດຖະບານ ຕາມທີ່ກຳນົດໃນຂໍ້ 1 ມາດຕາ 7 ຂອງດຳລັດສະບັບນີ້ ໃຫ້ເກັບດອກເບ້ຍໃນອັດຕາສູງສຸດ ບໍ່ເກີນ 3 ສ່ວນຮ້ອຍ;

2. ການສະໜອງສິນເຊື່ອ ທີ່ນຳໃຊ້ທຶນ ທີ່ໄດ້ຮັບຈາກແຫຼ່ງອື່ນ ທີ່ບໍ່ແມ່ນການປະກອບທຶນຂອງລັດຖະບານ ໃຫ້ເກັບດອກເບ້ຍ ໃນອັດຕາທີ່ຕ່ຳກວ່າອັດຕາດອກເບ້ຍເງິນກູ້ໂດຍສະເລ່ຍ ຂອງ 5 ທະນາຄານທຸລະກິດ ຢ່າງໜ້ອຍ 30% ຫຼື ປະຕິບັດຕາມເງື່ອນໄຂຂອງຜູ້ໃຫ້ທຶນ ແລະ ດອກເບ້ຍຕົ້ນທຶນ ໂດຍກຳນົດອັດຕາດອກເບ້ຍສ່ວນຕ່າງ ບໍ່ເກີນ 3 ສ່ວນຮ້ອຍ ຈາກອັດຕາດອກເບ້ຍຕົ້ນທຶນ ທີ່ໄດ້ຮັບມາ.

**ມາດຕາ 14 ເງື່ອນໄຂ ຂອງ ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ທີ່ຈະໄດ້ທຶນຈາກ ທລສ**

ໃນການກຳນົດເງື່ອນໄຂ ຂອງ ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ທີ່ຈະໄດ້ຮັບທຶນຈາກ ທລສ ໃຫ້ອີງໃສ່ປັດໄຈ ດັ່ງນີ້:

1. ຜົນການດຳເນີນທຸລະກິດ;

2. ຈຳນວນສາຂາ;

3. ໜີ້ບໍ່ເກີດດອກອອກຜົນ.

ໃຫ້ສະພາບໍລິຫານ ທລສ ເປັນຜູ້ຄົ້ນຄວ້າກຳນົດລະອຽດ ກ່ຽວກັບເງື່ອນໄຂໃນແຕ່ລະປັດໄຈ.

ມາດຕາ 15 ເງື່ອນໄຂ ຂອງ ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ຈະໄດ້ຮັບສິນເຊື່ອ

ເງື່ອນໄຂການພິຈາລະນາຄັດເລືອກ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການສະໜອງສິນເຊື່ອ ຂອງ ທສວ ຕາມທີ່ກຳນົດໄວ້ໃນຂໍ້ທີ 1 ຂອງມາດຕາ 10 ຂອງ ດຳລັດສະບັບນີ້ ໃຫ້ປະຕິບັດ ດັ່ງນີ້:

1. ສຳລັບທຶນທີ່ລັດຖະບານປະກອບໃຫ້ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1) ມີແຜນການດຳເນີນທຸລະກິດທີ່ຈະແຈ້ງ ແລະ ຊັດເຈນ;
2) ໄດ້ຮັບການຝຶກອົບຮົມສ້າງຄວາມເຂັ້ມແຂງຈາກ ຂະແໜງອຸດສາຫະກຳ ແລະ ການຄ້າ ຫຼື ພາກສ່ວນອື່ນ ທີ່ໄດ້ຮັບການຢັ້ງຢືນຢ່າງເປັນທາງການຈາກ ຂະແໜງອຸດສາຫະກຳ ແລະ ການຄ້າ;
3) ເປັນວິສາຫະກິດທີ່ຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ບໍ່ເປັນໜີ້ບໍ່ເກີດດອກອອກຜົນ ຢູ່ນຳທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ;
4) ເປັນຂະແໜງການ ຫຼື ຂົງເຂດບຸລິມະສິດທີ່ ລັດຖະບານ ກຳນົດໃນແຕ່ລະໄລຍະ ແລະ ເປັນຂະແໜງການທີ່ມີຜົນຕອບແທນດ້ານທຸລະກິດ ເພື່ອຮັບປະກັນໃຫ້ ທສວ ມີຄວາມຍືນຍົງ;

ໂຄງການທີ່ຈະໄດ້ຮັບບຸລິມະສິດ ໃນການພິຈາລະນາ ຕ້ອງເປັນໂຄງການທີ່ບໍ່ໄດ້ຮັບນະໂຍບາຍສົ່ງເສີມດ້ານສິນເຊື່ອອື່ນຂອງ ລັດຖະບານ ໃນໄລຍະເວລາດຽວກັນ.

2. ສຳລັບທຶນຈາກແຫຼ່ງອື່ນ ຕ້ອງປະຕິບັດຕາມເງື່ອນໄຂຂອງ ຜູ້ໃຫ້ທຶນ ຫຼື ຕາມການພິຈາລະນາຂອງສະພາບໍລິຫານ ທສວ.

## ໝວດທີ 4
## ການສະໜອງທຶນໃຫ້ ໂຄງການວິຊາການ

ມາດຕາ 16 ການສະໜອງທຶນໃຫ້ ໂຄງການວິຊາການ

ທສວ ສະໜອງທຶນໃຫ້ໂຄງການວິຊາການ ເພື່ອຈັດຕັ້ງປະຕິບັດກິດຈະກຳຕ່າງໆ ເຊັ່ນ ການຝຶກອົບຮົມ; ການປະຊຸມສຳມະນາດ້ານວິຊາການ; ການວາງສະແດງ; ການຈັດຈ້າງຜູ້ຊ່ຽວຊານ ດ້ານຕ່າງໆ; ການປັບປຸງ ຫຼື ຍົກລະດັບເຕັກໂນໂລຊີ, ການພັດທະນາຜະລິດຕະພັນ ແລະ ການຫຸ້ມຫໍ່, ການປັບປຸງມາດ ຕະຖານຄຸນນະພາບ; ການທັດສະນະສຶກສາແລກປ່ຽນບົດຮຽນ ຂອງຜູ້ປະກອບກິດຈະການ ແລະ ການປັບປຸງທຸລະກິດດ້ານອື່ນໆ.

ໂຄງການວິຊາການ ທີ່ຈະໄດ້ຮັບການສະໜອງທຶນຕ້ອງສອດຄ່ອງຕາມກິດຈະການທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງລັດຖະບານ, ແຂວງ ແລະ ນະຄອນຫຼວງ ວາງອອກ ໃນແຕ່ລະໄລຍະ.

ສຳລັບລະບຽບການສະໜອງທຶນໃຫ້ ໂຄງການວິຊາການ ຈະກຳນົດຕ່າງຫາກ ມອບໃຫ້ສະພາບໍລິຫານ ທສວ ເປັນຜູ້ພິຈາລະນາຮັບຮອງ.

ມາດຕາ 17 ເງື່ອນໄຂການພິຈາລະນາສະໜອງທຶນໃຫ້ ໂຄງການວິຊາການ

ບັນດາໂຄງການທີ່ຈະໄດ້ຮັບພິຈາລະນາສະໜອງທຶນຈາກ ທສວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຕ້ອງເປັນໂຄງການທີ່ສະເໜີໂດຍໜ່ວຍງານຂອງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ມີບົດບາດສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;

2. ຕ້ອງເປັນໂຄງການທີ່ສະເໜີໂດຍ ຫົວໜ່ວຍວິສາຫະກິດຂະໜາດນ້ອຍ ແລະ ກາງ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ສະມາຄົມ, ກຸ່ມທຸລະກິດ, ທະນາຄານທຸລະກິດ ແລະ ອື່ນໆ ຢູ່ສູນກາງ ແລະ ທ້ອງຖິ່ນ.

## ໝວດທີ 5
## ການເງິນ ແລະ ການບັນຊີ

**ມາດຕາ 18 ລາຍຮັບ ແລະ ລາຍຈ່າຍ ຂອງ ທສວ**

ກ. ລາຍຮັບ ຂອງ ທສວ ມີດັ່ງນີ້:

1. ດອກເບ້ຍເງິນຝາກ;
2. ດອກເບ້ຍຈາກການສະໜອງສິນເຊື່ອຜ່ານທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ;
3. ລາຍຮັບ ຈາກການສະໜອງສິນເຊື່ອ ໃນຮູບແບບອື່ນ ຂອງ ທສວ.

ຂ. ລາຍຈ່າຍຂອງ ທສວ ມີດັ່ງນີ້:

1. ສະໜອງທຶນໃຫ້ໂຄງການສົ່ງເສີມວິຊາການ ຕາມທີ່ກຳນົດໃນມາດຕາ 16 ຂອງດຳລັດສະບັບນີ້;
2. ດອກເບ້ຍ ແລະ ຕົ້ນທຶນເງິນກູ້;
3. ເງິນເດືອນພະນັກງານຕາມສັນຍາ ແລະ ຄ່າຈ້າງຊ່ຽວຊານສະເພາະໃດໜຶ່ງ ໃນກໍລະນີຈຳເປັນ;
4. ເງິນບໍລິຫານຂອງ ທສວ ລວມທັງການບຳລຸງ-ກໍ່ສ້າງພະນັກງານ ຂອງ ທສວ ແລະ ເງິນເບ້ຍປະຊຸມ-ນະໂຍບາຍ ຂອງສະມາຊິກສະພາບໍລິຫານ ແລະ ພະນັກງານ ທສວ.

ລາຍຮັບ ຂອງ ທສວ ຕາມກຳນົດໃນຂໍ້ ກ ຫຼັງຈາກຫັກລາຍຈ່າຍ ຕາມກຳນົດໃນຂໍ້ ຂ ຂອງມາດຕານີ້ ແມ່ນມອບເຂົ້າເປັນລາຍຮັບຂອງ ທສວ ຕາມທີ່ກຳນົດໃນຂໍ້ 5 ມາດຕາ 7 ຂອງດຳລັດສະບັບນີ້.

ໃຫ້ ສະພາບໍລິຫານ ທສວ ຄົ້ນຄວ້າກຳນົດລະບຽບການຄຸ້ມຄອງ ລາຍຮັບ ແລະ ລາຍຈ່າຍ ໃຫ້ລະອຽດ, ຮັດກຸມ, ຮັບປະກັນໃຫ້ນຳໃຊ້ຖືກເປົ້າໝາຍ ແລະ ມີຄວາມໂປ່ງໃສ.

ການຄຸ້ມຄອງ ລາຍຮັບ ຂອງ ທສວ ແມ່ນ ໃຫ້ເປີດບັນຊີສະເພາະຢູ່ ຄັງເງິນແຫ່ງຊາດ ແລະ ທະນາຄານທຸລະກິດໃດໜຶ່ງ ຕາມການເຫັນດີຂອງ ກະຊວງການເງິນ.

**ມາດຕາ 19 ການບັນຊີ**

ທສວ ຕ້ອງຖືບັນຊີທີ່ສອດຄ່ອງກັບກົດໝາຍວ່າດ້ວຍ ການບັນຊີ.

**ມາດຕາ 20 ແຜນງົບປະມານການເຄື່ອນໄຫວປະຈຳປີຂອງ ທສວ**

ທສວ ສ້າງແຜນງົບປະມານການເຄື່ອນໄຫວປະຈຳປີຂອງຕົນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

ການຂຶ້ນແຜນງົບປະມານລາຍຈ່າຍຂອງ ທສວ ຕ້ອງບໍ່ເກີນຈຳນວນເງິນທີ່ມີໃນ ທສວ ແລະ ລັດຖະບານປະກອບໃຫ້. ນອກນັ້ນ ທສວ ຍັງຈັດຕັ້ງປະຕິບັດໂຄງການບູລິມະສິດອື່ນໆ ທີ່ລັດຖະບານ ຈັດສັນງົບປະມານໃຫ້ເປັນການສະເພາະ.

ໃນການສະຫຼຸບປີງົບປະມານ ຕ້ອງຍົກຍອດເງິນທີ່ຍັງເຫຼືອໃນ ທສວ ເຂົ້າເປັນລາຍຮັບ ຂອງ ທສວ ໃນປີຖັດໄປ.

## ໝວດທີ 6
## ການຄຸ້ມຄອງບໍລິຫານ ທສວ

### ມາດຕາ 21 ໂຄງປະກອບການຈັດຕັ້ງຂອງ ທສວ

ໂຄງປະກອບການຈັດຕັ້ງ ທສວ ປະກອບດ້ວຍ:

1. ສະພາບໍລິຫານ ທສວ;
2. ຄະນະກຳມະການກວດກາພາຍໃນ;
3. ຄະນະອຳນວຍການ ທສວ.

### ມາດຕາ 22 ສະພາບໍລິຫານ ທສວ

ສະພາບໍລິຫານເປັນອົງການບໍລິຫານສູງສຸດຂອງ ທສວ, ເປັນອົງການທີ່ບໍ່ປະຈຳການ ມີພາລະບົດບາດໃນການນຳພາ-ຊີ້ນຳ ແລະ ຕິດຕາມກວດກາການຄຸ້ມຄອງບໍລິຫານ ທສວ ໃຫ້ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ.

### ມາດຕາ 23 ໂຄງປະກອບບຸກຄະລາກອນຂອງ ສະພາບໍລິຫານ ທສວ

ໂຄງປະກອບບຸກຄະລາກອນຂອງ ສະພາບໍລິຫານ ທສວ ປະກອບດ້ວຍ:

| | | |
|---|---|---|
| 1. | ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ | ເປັນປະທານ; |
| 2. | ຫົວໜ້າກົມ, ກະຊວງການເງິນ | ເປັນຮອງປະທານ ແລະ ເປັນປະທານກວດກາພາຍໃນ; |
| 3. | ຫົວໜ້າກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ | ເປັນຄະນະ ແລະ ເປັນຮອງປະທານກວດກາພາຍໃນ; |
| 4. | ຫົວໜ້າກົມ, ທະນາຄານແຫ່ງ ສປປ ລາວ | ເປັນຄະນະ; |
| 5. | ຫົວໜ້າກົມ, ກະຊວງກະສິກຳ ແລະ ປ່າໄມ້ | ເປັນຄະນະ; |
| 6. | ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ | ເປັນຄະນະ ແລະ ເປັນກຳມະການຄະນະກວດກາພາຍໃນ; |
| 7. | ຜູ້ອຳນວຍການ ທສວ | ເປັນຄະນະ ທັງເປັນເລຂາຂອງສະພາບໍລິຫານ ທສວ. |

ໃນກໍລະນີຈຳເປັນ ສະພາບໍລິຫານ ທສວ ສາມາດແຕ່ງຕັ້ງຄະນະກຳມະການປະຈຳໄດ້ ໃນຈຳນວນ ບໍ່ເກີນ 3 ທ່ານ ເພື່ອຕົກລົງບັນຫາທີ່ສຳຄັນ ໃນລະຫວ່າງກາງຂອງກອງປະຊຸມສະພາບໍລິຫານ ທສວ. ທຸກການຕົກລົງ ຂອງຄະນະກຳມະການປະຈຳຕ້ອງລາຍງານໃຫ້ສະພາບໍລິຫານ ທສວ ໃນກອງປະຊຸມຖັດໄປ.

### ມາດຕາ 24 ການແຕ່ງຕັ້ງ, ປົດຕຳແໜ່ງ ແລະ ອາຍຸການ ຂອງສະມາຊິກສະພາບໍລິຫານ ທສວ

ສະມາຊິກສະພາບໍລິຫານ ທສວ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີ ຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໂດຍການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ສະມາຊິກສະພາບໍລິຫານ ທລສ ມີອາຍຸການ 5 ປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້ອີກ 1 ຄັ້ງ.

### ມາດຕາ 25 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ ທລສ

ສະພາບໍລິຫານ ທລສ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກໍານົດນະໂຍບາຍ, ລະບຽບການໃນການຄຸ້ມຄອງ ແລະ ການເຄື່ອນໄຫວວຽກງານຂອງ ທລສ;
2. ກໍານົດອັດຕາສ່ວນການນໍາໃຊ້ທຶນເຂົ້າໃນແຕ່ລະເປົ້າໝາຍ ຕາມທີ່ກໍານົດໄວ້ໃນ ມາດຕາ 8 ຂອງດໍາລັດສະບັບນີ້;
3. ກໍານົດອັດຕາດອກເບ້ຍເງິນກູ້ ຜ່ານທະນາຄານທຸລະກິດ, ສະຖາບັນການເງິນອື່ນ;
4. ກໍານົດເງື່ອນໄຂຂອງ ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ທີ່ຈະໄດ້ຮັບທຶນຂອງ ທລສ;
5. ຮັບຮອງລະບຽບການ ສະໜອງທຶນໂຄງການວິຊາການ;
6. ຮັບຮອງບົດລາຍງານ ແລະ ແຜນງົບປະມານການເຄື່ອນໄຫວປະຈໍາປີ, ຜົນການກວດສອບປະຈໍາປີ, ແຜນລາຍຮັບ ແລະ ລາຍຈ່າຍ ແລະ ມາດຕະການຈັດຕັ້ງປະຕິບັດແຜນດັ່ງກ່າວ;
7. ພິຈາລະນາຮັບຮອງເອົາການສະເໜີແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ຮອງຜູ້ອໍານວຍການ ທລສ ຕາມການສະເໜີຂອງຜູ້ອໍານວຍການ ທລສ;
8. ກໍານົດຂອບເຂດສິດຂອງຜູ້ອໍານວຍການ ທລສ ໃນການນໍາໃຊ້ທຶນຂອງ ທລສ ເຂົ້າໃນແຕ່ລະເປົ້າໝາຍ;
9. ຊີ້ນໍາ, ຊຸກຍູ້, ຕິດຕາມ ແລະ ກວດກາ ການເຄື່ອນໄຫວ ຂອງຄະນະອໍານວຍການ ທລສ;
10. ຕິດຕາມ, ກວດກາ ແລະ ປະເມີນຜົນການນໍາໃຊ້ທຶນຂອງ ທລສ;
11. ລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ;
12. ຮັບຜິດຊອບຕໍ່ຜົນສໍາເລັດ ແລະ ຂໍ້ບົກພ່ອງໃນການຄຸ້ມຄອງບໍລິຫານ ທລສ;
13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການ ຫຼື ຕາມການມອບໝາຍ.

ສະມາຊິກສະພາບໍລິຫານ ທລສ ບໍ່ໄດ້ຮັບເງິນເດືອນຈາກ ທລສ ແຕ່ຈະໄດ້ຮັບເບ້ຍປະຊຸມ ແລະ ເງິນນະໂຍບາຍຕາມລະບຽບການ.

### ມາດຕາ 26 ກອງປະຊຸມສະພາບໍລິຫານ ທລສ

ສະພາບໍລິຫານ ທລສ ເຄື່ອນໄຫວວຽກງານຕາມລະບອບປະຊຸມ ຊຶ່ງຈັດຂຶ້ນ 4 ຄັ້ງຕໍ່ປີ, ໃນກໍລະນີຈໍາເປັນ ແລະ ຮີບດ່ວນ ສາມາດເປີດກອງປະຊຸມສະໄໝວິສາມັນ ໄດ້ທຸກເວລາ ຕາມການຮຽກປະຊຸມ ຂອງປະທານສະພາບໍລິຫານ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ແຕ່ 3 ຄົນຂຶ້ນໄປ.

ກອງປະຊຸມສະພາບໍລິຫານ ທລສ ຈະເປີດຂຶ້ນໄດ້ກໍ່ຕໍ່ເມື່ອມີສະມາຊິກສະພາບໍລິຫານເຂົ້າຮ່ວມຢ່າງໜ້ອຍ 2/3 ຂອງຈໍານວນສະມາຊິກທັງໝົດ. ມະຕິຂອງກອງປະຊຸມສະພາບໍລິຫານ ຈະມີຜົນບັງຄັບໃຊ້ກໍ່ຕໍ່ເມື່ອໄດ້ຮັບການຮັບຮອງຈາກສຽງສ່ວນຫຼາຍ ຂອງສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ.

### ມາດຕາ 27 ຄະນະກໍາມະການກວດກາພາຍໃນ

ຄະນະກໍາມະການກວດກາພາຍໃນເປັນຄະນະທີ່ບໍ່ປະຈໍາການ ປະກອບມີ 3 ທ່ານ, ປະທານ 1 ທ່ານ, ຮອງປະທານ 1 ທ່ານ ແລະ ກໍາມະການ 1 ທ່ານ.

ຮອງຜູ້ອຳນວຍການ ທລສ ຜູ້ຮັບຜິດຊອບວຽກງານກວດກາພາຍໃນຂອງ ທລສ ເຮັດໜ້າທີ່ເປັນກອງເລຂາໃຫ້ຄະນະກຳມະການກວດກາພາຍໃນ ຂອງສະພາບໍລິຫານ ທລສ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດກາພາຍໃນ**

ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດກາພາຍໃນ ມີດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ;
2. ກວດກາຄວາມຖືກຕ້ອງຂອງເອກະສານລາຍງານການເງິນ;
3. ກວດກາປະສິດທິຜົນຂອງການດຳເນີນງານ;
4. ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານກວດກາຂອງໜ່ວຍງານກວດກາພາຍໃນ ຂອງ ທລສ;
5. ເຂົ້າຮ່ວມ ແລະ ລາຍງານຜົນການກວດກາຕໍ່ ກອງປະຊຸມສະພາບໍລິຫານ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງສະພາບໍລິຫານ ທລສ.

**ມາດຕາ 29 ໂຄງປະກອບບຸກຄະລາກອນ ຂອງ ທລສ**

ໂຄງປະກອບບຸກຄະລາກອນ ຂອງ ທລສ ປະກອບມີ ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ ທລສ ຈຳນວນໜຶ່ງ, ຫົວໜ້າຂະແໜງ, ພະນັກງານວິຊາການ, ພະນັກງານຕາມສັນຍາ ແລະ ຊ່ຽວຊານສະເພາະດ້ານ.

ຜູ້ອຳນວຍການ ທລສ ມີຕຳແໜ່ງທຽບເທົ່າຮອງຫົວໜ້າກົມ, ຮອງຜູ້ອຳນວຍການ ມີຕຳແໜ່ງທຽບເທົ່າຫົວໜ້າພະແນກ ແລະ ຫົວໜ້າຂະແໜງ ມີຕຳແໜ່ງທຽບເທົ່າຮອງຫົວໜ້າພະແນກ.

**ມາດຕາ 30 ການແຕ່ງຕັ້ງບຸກຄະລາກອນ ຂອງ ທລສ**

ຜູ້ອຳນວຍການ ທລສ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕາມການສະເໜີ ຂອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ.

ຮອງຜູ້ອຳນວຍການ ທລສ ແລະ ຫົວໜ້າຂະແໜງ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕາມການຕົກລົງຂອງສະພາບໍລິຫານ ທລສ ບົນພື້ນຖານການ ສະເໜີຂອງຜູ້ອຳນວຍການ ທລສ.

**ມາດຕາ 31 ມາດຖານ ເງື່ອນໄຂ ຂອງຜູ້ອຳນວຍການ ທລສ**

ຜູ້ອຳນວຍການ ທລສ ຕ້ອງມີມາດຖານ ເງື່ອນໄຂ ດັ່ງນີ້:

1. ຕ້ອງມີຕຳແໜ່ງເປັນຮອງຫົວໜ້າກົມ;

2. ມີວຸດທິການສຶກສາ ຈົບປະລິນຍາຕີຂຶ້ນໄປ ສາຂາເສດຖະກິດ, ການເງິນ-ການທະນາຄານ, ການບໍລິຫານທຸລະກິດ, ກົດໝາຍ, ການບັນຊີ ແລະ ການກວດສອບ;

3. ມີປະສົບການ ໃນການເປັນພະນັກງານນຳພາ-ຄຸ້ມຄອງ 5 ປີຂຶ້ນໄປ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງຜູ້ອຳນວຍການ ທລສ**

ຜູ້ອຳນວຍການ ທລສ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບຕໍ່ສະພາບໍລິຫານ ທລສ ໃນການຄຸ້ມຄອງວຽກງານປະຈຳວັນຂອງ ທລສ ຕາມນະໂຍບາຍ, ມະຕິຂອງສະພາບໍລິຫານ ທລສ ແລະ ສອດຄ່ອງກັບກົດໝາຍ;

2. ສ້າງບົດລາຍງານ ແລະ ແຜນການເຄື່ອນໄຫວປະຈຳປີ, ແຜນລາຍຮັບ ແລະ ລາຍຈ່າຍປະຈຳປີ ເພື່ອນຳສະເໜີຕໍ່ສະພາບໍລິຫານ ທລສ ພິຈາລະນາຮັບຮອງ;

3. ຄົ້ນຄວ້າອັດຕາດອກເບ້ຍເງິນກູ້ ຜ່ານທະນາຄານທຸລະກິດ, ສະຖາບັນການເງິນອື່ນ;

4. ຄົ້ນຄວ້າເງື່ອນໄຂຂອງ ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ທີ່ຈະໄດ້ຮັບທຶນຂອງ ທລສ;

5. ຄົ້ນຄວ້າ ແລະ ສ້າງລະບຽບການ ສະໜອງທຶນໂຄງການວິຊາການ;

6. ຄົ້ນຄວ້າ ແລະ ສ້າງລະບຽບການບໍລິຫານ ທລສ ເພື່ອນຳສະເໜີສະພາບໍລິຫານ ພິຈາລະນາ ຮັບຮອງ;

7. ຂົນຂວາຍ, ລະດົມທຶນ ຈາກແຫຼ່ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;

8. ພິຈາລະນາອະນຸມັດການນຳໃຊ້ທຶນຂອງ ທລສ ຕາມເປົ້າໝາຍ ແລະ ຂອບເຂດສິດ ທີ່ສະພາ ບໍລິຫານ ທລສ ກຳນົດໃຫ້;

9. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຜູ້ອຳນວຍການ ທລສ ແລະ ຫົວໜ້າຂະແໜງ ຂອງ ທລສ;

10. ຮັບສະໝັກ, ຄັດເລືອກ ແລະ ບັນຈຸຊັບຊ້ອນບຸກຄະລາກອນ ເຂົ້າເຮັດວຽກໃນ ທລສ ຕາມຕຳ ແໜ່ງງານ ແລະ ຈຳນວນທີ່ໄດ້ຮັບອະນຸມັດຈາກສະພາບໍລິຫານ ທລສ;

11. ຄັດເລືອກ ແລະ ວ່າຈ້າງຜູ້ຊ່ຽວຊານ ຫຼື ທີ່ປຶກສາສະເພາະດ້ານ ເພື່ອປະຕິບັດໜ້າທີ່ສະເພາະໃດ ໜຶ່ງຕາມຄວາມຈຳເປັນ ແລະ ການເຫັນດີຂອງສະພາບໍລິຫານ ທລສ;

12. ພົວພັນ, ຮ່ວມມືກັບອົງການຈັດຕັ້ງ ແລະ ຄູ່ຮ່ວມພັດທະນາກ່ຽວກັບວຽກງານ ທລສ;

13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງ ທລສ ປະຈຳ 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ ໃຫ້ສະພາບໍລິຫານ ທລສ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງສະພາບໍລິຫານ ທລສ.

## ໝວດທີ 7
## ການກວດສອບ ແລະ ລາຍງານ

### ມາດຕາ 33 ການກວດສອບພາຍໃນ ແລະ ພາຍນອກ

ທຸກການເຄື່ອນໄຫວວຽກງານຂອງ ທລສ ເປັນຕົ້ນການບັນຊີ, ລາຍງານການເງິນ, ການຈັດຊື້-ຈັດຈ້າງ, ສັນຍາມອບສິດໃຫ້ທະນາຄານ ຕ້ອງໄດ້ຮັບການກວດສອບພາຍໃນຢ່າງເປັນປົກກະຕິ ຕາມລະບຽບການບໍລິຫານຂອງ ທລສ ແລະ ການກວດສອບປະຈຳປີ ໂດຍອົງການກວດສອບແຫ່ງລັດ ຫຼື ໂດຍວິສາຫະກິດກວດສອບຕາມການສະເໜີຂອງ ທລສ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 34 ການກວດກາ ທລສ

ການກວດກາ ທລສ ປະກອບມີ 2 ປະເພດດັ່ງນີ້:

1. ການກວດກາປົກກະຕິ ແມ່ນ ການກວດກາຂອງຄະນະກຳມະການກວດກາພາຍໃນຊຶ່ງດຳເນີນເປັນປົກກະຕິ ໂດຍອີງໃສ່ຜົນຂອງການກວດສອບພາຍໃນ;

2. ການກວດກາສະເພາະກິດ ແມ່ນ ການກວດກາຂອງລັດຖະບານຕໍ່ການເຄື່ອນໄຫວວຽກງານຮອບດ້ານຂອງ ທລສ ໃນກໍລະນີມີຄວາມຈຳເປັນ.

ໃນກໍລະນີຫາກພົບຂອງການກວດກາປົກກະຕິ ແລະ ສະເພາະກິດມີຄວາມບໍ່ຖືກຕ້ອງ, ສະພາບໍລິຫານ ທລສ ຕ້ອງແກ້ໄຂໃຫ້ຂາດຕົວ ແລະ ທັນການຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 35 ການລາຍງານ**

ທລສ ຕ້ອງສົ່ງບົດລາຍງານການເຄື່ອນໄຫວປະຈຳ 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ, ລາຍງານທຸກແຫຼ່ງລາຍຮັບ ແລະ ລາຍຈ່າຍປະຈຳປີ ແລະ ບົດລາຍງານການກວດສອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ ແລະ ລັດຖະບານ.

## ໝວດທີ 8
## ຄວາມຮັບຜິດຊອບ ຂອງກະຊວງ ແລະ ອົງການທີ່ກ່ຽວຂ້ອງ

**ມາດຕາ 36 ຄວາມຮັບຜິດຊອບ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງ ທລສ ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າພິຈາລະນາຮັບຮອງເອົານະໂຍບາຍ, ນິຕິກຳ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ທລສ ເພື່ອສະເໜີ ລັດຖະບານ ຕົກລົງ;

2. ປະສານງານກັບຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ເພື່ອກຳນົດຂະແໜງ ແລະ ເຂດບູລິມະສິດໃນການສົ່ງເສີມແຕ່ລະໄລຍະ ເພື່ອສະເໜີ ລັດຖະບານ ຕົກລົງ;

3. ນຳສະເໜີແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈຳປີ ຂອງ ທລສ ທີ່ສະພາບໍລິຫານ ທລສ ໄດ້ອະນຸມັດແລ້ວນັ້ນ ໃຫ້ ລັດຖະບານ ພິຈາລະນາເອົາເຂົ້າແຜນງົບປະມານປະຈຳປີ;

4. ນຳສະເໜີ ລັດຖະບານ ພິຈາລະນາການສະໜອງງົບປະມານ, ການກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດເພື່ອເພີ່ມທຶນໃຫ້ ທລສ ຕາມຄວາມຕ້ອງການໃນແຕ່ລະໄລຍະ;

5. ຄົ້ນຄວ້ານຳສະເໜີ ລັດຖະບານ ພິຈາລະນາ ໂຄງການບູລິມະສິດ ທີ່ສະເໜີຂໍການສະໜອງສິນເຊື່ອເກີນ 70 ສ່ວນຮ້ອຍ ແຕ່ບໍ່ເກີນ 100 ສ່ວນຮ້ອຍ ຂອງມູນຄ່າຊັບສິນວິສາຫະກິດທີ່ກູ້ຢືມ;

6. ຄົ້ນຄວ້າ ແລະ ນຳສະເໜີ ນາຍົກລັດຖະມົນຕີ ພິຈາລະນາ ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ສະມາຊິກສະພາບໍລິຫານ ທລສ;

7. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຜູ້ອຳນວຍການ, ຮອງຜູ້ອຳນວຍການ ທລສ ແລະ ຫົວໜ້າຂະແໜງ;

8. ໂຄສະນາ, ເຜີຍແຜ່ນະໂຍບາຍ, ນິຕິກຳ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ທລສ ໃຫ້ພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດ ຢ່າງທົ່ວເຖິງ;

9. ໃຫ້ການປຶກສາ, ຝຶກອົບຮົມ ແລະ ການຊ່ວຍເຫຼືອດ້ານວິຊາການແກ່ ວິສາຫະກິດຂະໜາດນ້ອຍ ແລະ ກາງ;

10. ສົມທົບກັບ ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ ເພື່ອໃຫ້ທິດຊີ້ນຳກ່ຽວກັບການເຄື່ອນໄຫວ ທລສ;

11. ຮັບຮອງ ແລະ ນຳສົ່ງການສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ທລສ ໃຫ້ ລັດຖະບານ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ມາດຕາ 37 ຄວາມຮັບຜິດຊອບ ຂອງ ກະຊວງການເງິນ

ໃນການຄຸ້ມຄອງ ທສວ ກະຊວງການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດສັນງົບປະມານໃຫ້ ທສວ ແຕ່ລະໄລຍະຕາມການຕົກລົງ ຂອງລັດຖະບານ;
2. ອຳນວຍຄວາມສະດວກໃຫ້ ທສວ ໃນການເຂົ້າເຖິງແຫຼ່ງທຶນ ຈາກແຫຼ່ງຕ່າງໆ ທີ່ເປັນໄປໄດ້;
3. ຕິດຕາມ ແລະ ໃຫ້ການແນະນຳກ່ຽວກັບລະບຽບການນຳໃຊ້ເງິນຂອງ ທສວ;
4. ຄົ້ນຄວ້າລະບຽບການທີ່ຈຳເປັນເພື່ອອຳນວຍຄວາມສະດວກໃຫ້ ການເຄື່ອນໄຫວວຽກງານ ຂອງ ທສວ;
5. ລະດົມທຶນຈາກພາຍໃນ ແລະ ຕ່າງປະເທດເພື່ອເພີ່ມທຶນໃຫ້ ທສວ ຕາມຄວາມເໝາະສົມ ໃນແຕ່ລະໄລຍະ;
6. ເຈລະຈາ ແລະ ເຊັນສັນຍາກັບອົງການຈັດຕັ້ງສາກົນ, ສະຖາບັນການເງິນ ແລະ ຕ່າງປະເທດ ກ່ຽວກັບການຮ່ວມມືດ້ານການເງິນເພື່ອສະໜອງທຶນໃຫ້ ທສວ.

## ມາດຕາ 38 ຄວາມຮັບຜິດຊອບ ຂອງ ທະນາຄານ ແຫ່ງ ສປປ ລາວ

ໃນການຄຸ້ມຄອງ ທສວ ທະນາຄານ ແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າລະບຽບການ ແລະ ເງື່ອນໄຂ ທີ່ຕິດພັນກັບພາລະບົດບາດ ຂອງທະນາຄານແຫ່ງ ສປປ ລາວ ໃນການສົ່ງເສີມ ວິສາຫະກິດຂະໜາດນ້ອຍ ແລະ ກາງ ເຂົ້າເຖິງແຫຼ່ງທຶນໃຫ້ເພີ່ມຂຶ້ນ;
2. ໃຫ້ການປຶກສາ ແລະ ປະກອບຄຳເຫັນແກ່ ທສວ ກ່ຽວກັບການກຳນົດນະໂຍບາຍ, ກົນໄກ ແລະ ລະບຽບການສິນເຊື່ອສົ່ງເສີມ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງ ທສວ;
3. ຮັບການໂອນເງິນຈາກສະຖາບັນການເງິນສາກົນ ແລະ ຕ່າງປະເທດ ເພື່ອເປັນບ່ອນຄ່ຽນຖ່າຍເງິນໃຫ້ ທສວ.

## ມາດຕາ 39 ຄວາມຮັບຜິດຊອບ ຂອງ ກະຊວງ ແລະ ອົງການອື່ນທີ່ກ່ຽວຂ້ອງ

ບັນດາກະຊວງ ແລະ ອົງການອື່ນທີ່ກ່ຽວຂ້ອງ ອຳນວຍຄວາມສະດວກໃຫ້ການຈັດຕັ້ງເຄື່ອນໄຫວ, ການລະດົມທຶນ, ການສະໜອງຂໍ້ມູນ ແລະ ໃຫ້ການຮ່ວມມືດ້ານຕ່າງໆ ຕາມການສະເໜີ ຂອງ ທສວ.

ບັນດາກະຊວງ ແລະ ຂະແໜງການ ທີ່ນອນຢູ່ໃນຂະແໜງການບູລິມະສິດ ຂອງລັດຖະບານ ມີໜ້າທີ່ໃນການສ້າງຄວາມເຂັ້ມແຂງດ້ານວິຊາການ ແລະ ຄວາມອາດສາມາດໃນການແຂ່ງຂັນ ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຂະແໜງການ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບ ຂອງຕົນເອງ.

## ມາດຕາ 40 ຄວາມຮັບຜິດຊອບ ຂອງ ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ

ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອະນຸມັດປ່ອຍກູ້ໃຫ້ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຕ້ອງສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງດຳລັດສະບັບນີ້ ໂດຍບໍ່ສາມາດກຳນົດເງື່ອນໄຂອື່ນເພີ່ມເຕີມ, ຍົກເວັ້ນເງື່ອນໄຂຕ່າງໆ ຂອງຜູ້ໃຫ້ທຶນ ແລະ ຄວນປະຕິບັດກັບທຸກວິສາຫະກິດຂະໜາດນ້ອຍ ແລະ ກາງ ຢ່າງເທົ່າທຽມກັນ;
2. ປະເມີນ ແລະ ອະນຸມັດປ່ອຍກູ້ ຕ້ອງປະຕິບັດຕາມຂັ້ນຕອນ ຂອງ ທະນາຄານ ຢ່າງເຂັ້ມງວດ;

3. ຕິດຕາມ, ກວດສອບການນຳໃຊ້ເງິນທຶນ ຂອງ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ຖືກຕ້ອງສອດຄ່ອງຕາມຈຸດປະສົງ ແລະ ເປົ້າໝາຍ;

4. ຕ້ອງຮັບປະກັນ ບໍ່ນຳເອົາເງິນທຶນຈາກ ທສວ ໄປຝາກຕໍ່ ແລະ ໃຊ້ຈ່າຍ ເພື່ອຈຸດປະສົງອື່ນ ທີ່ນອກເໜືອຈາກການປ່ອຍກູ້ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ;

5. ຈ່າຍຕົ້ນທຶນ ແລະ ດອກເບ້ຍໃຫ້ ທສວ ຖືກຕ້ອງ, ຄົບຖ້ວນ ຕາມກຳນົດເວລາ ທີ່ລະບຸໃນສັນຍາກັບ ທສວ;

6. ຕ້ອງສະຫຼຸບລາຍງານການນຳໃຊ້ເງິນທຶນເປັນປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ ໃຫ້ ທສວ ຕາມລະບຽບການ ຂອງ ທສວ;

7. ຕ້ອງສົ່ງບົດລາຍງານການເງິນ ແລະ ບົດລາຍງານກວດສອບປະຈຳປີ ໃຫ້ ທສວ;

8. ປະກອບສ່ວນໃນການໃຫ້ຄຳປຶກສາ, ຝຶກອົບຮົມ ເພື່ອສ້າງຄວາມເຂັ້ມແຂງ ແລະ ຄວາມອາດສາມາດໃຫ້ ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ກູ້ຢືມ ທສວ ເງິນຈາກທະນາຄານ;

9. ປະກອບສ່ວນໃນການເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບແຫຼ່ງທຶນ ຂອງ ທສວ ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ຮັບຊາບຢ່າງທົ່ວເຖິງ.

ມາດຕາ 41 ຄວາມຮັບຜິດຊອບ ຂອງ ວິສາຫະກິດຂະໜາດນ້ອຍ ແລະ ກາງ

ວິສາຫະກິດຂະໜາດນ້ອຍ ແລະ ກາງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳໃຊ້ເງິນກູ້ ແລະ ທຶນໂຄງການວິຊາການ ໃຫ້ຖືກຕ້ອງຕາມເປົ້າໝາຍ, ສອດຄ່ອງກັບສັນຍາທີ່ໄດ້ເຊັນກັບທະນາຄານ, ສະຖາບັນການເງິນອື່ນ ແລະ ທສວ;

2. ປະຕິບັດພັນທະທີ່ລະບຸໃນສັນຍາຢ່າງຄົບຖ້ວນ ແລະ ເຂັ້ມງວດ ຕາມສັນຍາທີ່ໄດ້ເຊັນກັບທະນາຄານ, ສະຖາບັນການເງິນອື່ນ ແລະ ທສວ;

3. ສະໜອງຂໍ້ມູນ ແລະ ເອກະສານ ທີ່ກ່ຽວກັບການກູ້ຢືມ ການນຳໃຊ້ທຶນຂອງ ທສວ ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ເຊື່ອຖືໄດ້ ໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ ຕາມກຳນົດເວລາ;

4. ສະໜອງຂໍ້ມູນ ແລະ ເອກະສານ ທີ່ກ່ຽວກັບການນຳໃຊ້ທຶນໂຄງການວິຊາການ ຂອງ ທສວ ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ເຊື່ອຖືໄດ້ ໃຫ້ ທສວ ຕາມກຳນົດເວລາ;

5. ຕ້ອງປະຕິບັດຕາມກົດໝາຍ ແລະ ມາດຕະຖານ ການປົກປ້ອງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງ ສປປ ລາວ.

ມາດຕາ 42 ຄວາມຮັບຜິດຊອບ ຂອງ ຜູ້ຮັບທຶນໂຄງການວິຊາການ

ຜູ້ໄດ້ທຶນໂຄງການວິຊາການ ທີ່ໄດ້ກຳນົດໃນມາດຕາ 17 ຂອງດຳລັດສະບັບນີ້ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ນຳໃຊ້ທຶນໂຄງການວິຊາການ ໃຫ້ຖືກຕ້ອງຕາມເປົ້າໝາຍ, ສອດຄ່ອງກັບສັນຍາທີ່ໄດ້ເຊັນກັບ ທສວ;

2. ປະຕິບັດພັນທະທີ່ລະບຸໃນສັນຍາຢ່າງຄົບຖ້ວນ ແລະ ເຂັ້ມງວດ ຕາມສັນຍາທີ່ໄດ້ເຊັນກັບ ທສວ;

3. ສະໜອງຂໍ້ມູນ, ລາຍງານກ່ຽວກັບການຈັດຕັ້ງປະຕິບັດ ແລະ ການນຳໃຊ້ເງິນ ທີ່ກ່ຽວກັບການນຳໃຊ້ທຶນໂຄງການວິຊາການ ຂອງ ທສວ ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ເຊື່ອຖືໄດ້ ໃຫ້ ທສວ ຕາມກຳນົດເວລາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 43 ເຄື່ອງໝາຍ ແລະ ຕາປະທັບ**

ທລວ ມີເຄື່ອງໝາຍ ແລະ ຕາປະທັບເປັນຂອງຕົນເອງ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 44 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການສົມທົບກັບ ກະຊວງການເງິນ, ທະນາຄານ ແຫ່ງ ສປປ ລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 45 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ດຳລັດສະບັບນີ້ ປ່ຽນແທນ ດຳລັດວ່າດ້ວຍກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 123/ນຍ, ລົງວັນທີ 3 ມີນາ 2010.

ລັດຖະບານແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ